ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຊົນລະປະທານ

ນະຄອນຫຼວງວຽງຈັນ, ວັນທີ: 17 ມີນາ 2023

## ແຈ້ງເຊີນສົມທຽບລາຄາ

ລະຫັດ: PICSA/C1/G/2023-05

1. ສ ປປ ລາວ ໄດ້ຮັບທຶນເງິນກູ້ ຈາກກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ໃນການ ຈັດຕັ້ງປະຕິບັດ ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ແລະ ຈະນຳໃຊ້ທຶນສ່ວນໜຶ່ງຂອງໂຄງການໃນການຈັດຊື້ ເຄື່ອງມື-ອຸປະກອນ ໄອທີຄື: 1). ຄອມພິວເຕີຕັ້ງໂຕະ ຈຳນວນ1 ໜ່ວຍ, 2). ຄອມພິວເຕີແລັບທອັບ ຈຳນວນ 28 ໜ່ວຍ ແລະ ປຣິນເຕີ ຈຳນວນ 6 ໜ່ວຍ ຕາມລະຫັດແຜນ ງົບປະມານ ປະຈຳປີ 2022 ( C 2.1.9.1).
2. ກະຊວງກະສິກຳ ແລະ ປ່າໄມ້, ກົມຊົນລະປະທານ ຂໍແຈ້ງເຊີນເຖິງຜູ້ສະໜອງພາຫະນະ ມີເງື່ອນໄຂ ທີ່ສົນໃຈເຂົ້າຮ່ວມສົມທຽບລາຄາ ການຈັດ ຊື້ ເຄື່ອງມື-ອຸປະກອນ ໄອທີ, ໄລຍະການສົ່ງມອບສິນຄ້າແມ່ນ 60 ວັນ ພາຍຫຼັງເຊັນສັນຍາເປັນຕົ້ນໄປ.
3. ການສົມທຽບລາຄາ ແມ່ນຈະໄດ້ຈັດຂຶ້ນຕາມຂະບວນການປະມູນສົມທຽບລາຄາດັ່ງທີ່ໄດ້ລະບຸໄວ້ໃນກົດໝາຍການຈັດຊື້ ພາຍໃຕ້ທຶນຂອງລັດ ສະ ບັບລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ຂອງການຈັດຕັ້ງປະຕິບັດກົດໝາຍການຈັດຊື້ ພາຍໃຕ້ທຶນຂອງລັດຖະບານ, ອອກໂດຍ ກະຊວງການເງິນ ສະບັບເລກທີ: 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືການຈັດຊື້ຂອງໂຄງການ ຊກຂ ແລະ ຄູ່ມືການຈັດຊື້ ຂອງ IFAD.
4. ການແຈ້ງສົມທຽບລາຄາ ແມ່ນເປີດຮັບຜູ້ສະໜອງສິນຄ້າປະເພດເຄື່ອງໄອທີ ທີ່ມີເງື່ອນໄຂຄົບຖ້ວນເຊັ່ນ: ມີໃບທະບຽນວິສະຫະກິດ ແລະ ໃບ ອະນຸຍາດດຳເນີນທຸລະກິດ ໃນ ສ ປປ ລາວ ແລະ ມີປະສົບການໃນການສະໜອງ ສິນຄ້າປະເພດເຄື່ອງໄອທີ ຜ່ານມາ 5 ປີຂຶ້ນໄປ.
5. ຜູ້ສະໜອງພາຫະນະ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຂໍ້ມູນລາຍລະອຽດເພີ່ມເຕີມໄດ້ໃນໂມງລັດຖະການ ຕາມທີ່ຢູ່ທີ່ໄດ້ລະບຸໄວ້ລຸ່ມນີ້: ທ່ານ ວິລະ ເຫຼົ່າກົມ ຮອງຜູ້ປະສານງານໂຄງການ ຊກຂ ຂັ້ນສູນກາງ, ຫ້ອງການປະສານງານ ໂຄງການ ຊກຂ, ທີ່ຢູ່ ກົມຊົນລະ ປະທານ ຊັ້ນ 4 ໝາຍເລກໂທລະສັບ: 030 5022259, Email: picsa.ifad2020@gmail.com.
6. ຜູ້ສະໜອງທີ່ມີຄວາມສົນໃຈສາມາດພົວພັນ ແລະ ຊື້ຊອງ ເອກະສານສົມທຽບລາຄາ ທີ່ກ່ຽວຂ້ອງ ໃນໂມງລັດຖະການ ໃນລາຄາຊອງລະ 500.000 ກີບ (ຮັບສະເພາະເງິນສົດ) ຕາມທີ່ຢູ່ ແລະ ເບີໂທລະສັບທີ່ລະບຸຂ້າງເທິງນັ້ນ.
7. ເອກະສານສົມທຽບລາຄາທີ່ປະກອບຢ່າງຄົບຖ້ວນໂດຍຜູ້ສະໜອງຈະຕ້ອງສົ່ງກ່ອນ ເວລາ 10:00 ໂມງເຊົ້າ ຂອງວັນທີ 31 ມີນາ 2023. ການ ສົ່ງເອກະສານສົມທຽບລາຄາ ທາງເອເລັກໂທຣນິກແມ່ນຈະຖືກປະຕິເສດ. ການສົ່ງເອກະສານສົມທຽບລາຄາຊ້າກວ່າເວລາກຳນົດໄວ້ແມ່ນຈະ ຖືກປະຕິເສດ ແລະ ຊອງເອກະສານດັ່ງກ່າວຈະສົ່ງຄືນໃຫ້ຜູ້ສະໜອງໂດຍປັດສະຈາກການເປີດຊອງດັ່ງກ່າວ. ການເປີດຊອງສົມທຽບລາຄາ ແມ່ນຈະຈັດຂຶ້ນໃນເວລາ 10:00 ໂມງເຊົ້າ ຂອງວັນທີ 31 ມີນາ 2023 ໂດຍຊ້ອງໜ້າຄະນະກຳມະການຈັດຊື້-ຈັດຈ້າງຂອງໂຄງການ ຊກຂ ແລະ ຜູ້ສະໜອງເຄື່ອງໄອທີ ທີ່ສົນໃຈເຂົ້າຮ່ວມສົມທຽບລາຄາທັງໝົດ.
8. ທີ່ຢູ່ສຳລັບການຮັບເອກະສານສົມທຽບລາຄາ ແລະ ການເປີດຊອງປະມູນສົມທຽບລາຄາ ແມ່ນຈະຈັດຂຶ້ນໃນຫ້ອງປະຊຸມຊັ້ນ 4, ກົມຊົນລະ ປະທານ, ຖະໜົນເຈົ້າອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສປປ ລາວ.

ຫົວໜ້າກົມ

ບຸນຄຳ ສີດາວົງ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້

ກົມຊົນລະປະທານ

ນະຄອນຫຼວງວຽງຈັນ, ວັນທີ: 17 ມີນາ 2023

**ແຈ້ງເຊີນສົມທຽບລາຄາ**

ລະຫັດ: PICSA/C1/G/2023-10

1. ສ ປປ ລາວ ໄດ້ຮັບທຶນເງິນກູ້ ຈາກກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ໃນການ ຈັດຕັ້ງປະຕິບັດ ໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍ (ຊກຂ) ແລະ ຈະນຳໃຊ້ທຶນສ່ວນໜຶ່ງຂອງໂຄງການໃນການຈັດພິມປື້ມຄູ່ມືດ້ານໂພຊະນາການ ຕາມລະຫັດແຜນງົບປະມານ ປະຈຳປີ 2023 ( C 3.1.1.1).
2. ກະຊວງກະສິກຳ ແລະ ປ່າໄມ້, ກົມຊົນລະປະທານ ຂໍແຈ້ງເຊີນເຖິງຜູ້ສະໜອງພາຫະນະ ມີເງື່ອນໄຂ ທີ່ສົນໃຈເຂົ້າຮ່ວມສົມທຽບລາຄາ ຈັດພິມປື້ມຄູ່ມືດ້ານໂພຊະນາການ, ໄລຍະການສົ່ງມອບສິນຄ້າແມ່ນ 60 ວັນ ພາຍຫຼັງເຊັນສັນຍາເປັນຕົ້ນໄປ.
3. ການສົມທຽບລາຄາ ແມ່ນຈະໄດ້ຈັດຂຶ້ນຕາມຂະບວນການປະມູນສົມທຽບລາຄາ ດັ່ງທີ່ໄດ້ລະບຸໄວ້ໃນກົດໝາຍການຈັດຊື້ພາຍໃຕ້ທຶນຂອງລັດ ສະບັບລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ຂອງການຈັດຕັ້ງປະຕິບັດກົດໝາຍການຈັດຊື້ ພາຍໃຕ້ທຶນຂອງລັດຖະບານ, ອອກໂດຍ ກະຊວງການເງິນ ສະບັບເລກທີ: 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືການຈັດຊື້ຂອງໂຄງການ ຊກຂ ແລະ ຄູ່ມືການຈັດຊື້ ຂອງ IFAD.
4. ການແຈ້ງສົມທຽບລາຄາ ແມ່ນເປີດຮັບ ຜູ້ສະໜອງພາຫະນະທີ່ມີເງື່ອນໄຂຄົບຖ້ວນທັງໝົດເຊັ່ນ: ມີໃບທະບຽນວິສະຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ໃນ ສ ປປ ລາວ ແລະ ມີປະສົບການໃນການສະໜອງ ບໍລິການສິ່ງພິມ ຜ່ານມາ 2 ປີຂຶ້ນໄປ.
5. ຜູ້ສະໜອງການບໍລິການສິ່ງພິມທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນຂໍ້ມູນລາຍລະອຽດເພີ່ມເຕີມໄດ້ໃນໂມງລັດຖະການ ຕາມທີ່ໄດ້ລະບຸໄວ້ລຸ່ມ ນີ້: ທ່ານ ວິລະ ເຫຼົາກົມ ຮອງຜູ້ປະສານງານໂຄງການ ຊກຂ ຂັ້ນສູນກາງ, ຫ້ອງການປະສານງານ ໂຄງການ ຊກຂ, ທີ່ຢູ່ ກົມຊົນລະປະທານ ຊັ້ນ 4 ໝາຍເລກໂທລະສັບ: 030 5022259,Email: picsa.ifad2020@gmail.com.
6. ຜູ້ສະໜອງທີ່ມີຄວາມສົນໃຈສາມາດພົວພັນ ແລະ ຊື້ຊອງ ເອກະສານສົມທຽບລາຄາ ທີ່ກ່ຽວຂ້ອງ ໃນໂມງລັດຖະການ ໃນລາຄາຊອງລະ 150.000 ກີບ (ຮັບສະເພາະເງິນສົດ) ຕາມທີ່ຢູ່ ແລະ ເບີໂທລະສັບທີ່ລະບຸຂ້າງເທິງນັ້ນ.
7. ເອກະສານສົມທຽບລາຄາທີ່ປະກອບຢ່າງຄົບຖ້ວນໂດຍຜູ້ສະໜອງຈະຕ້ອງສົ່ງກ່ອນ ເວລາ 11:00 ໂມງເຊົ້າ ຂອງວັນທີ 31 ມີນາ 2023. ການສົ່ງເອກະສານສົມທຽບລາຄາ ທາງເອເລັກໂທຣນິກແມ່ນຈະຖືກປະຕິເສດ. ການສົ່ງເອກະສານສົມທຽບລາຄາຊ້າກວ່າເວລາກຳນົດໄວ້ແມ່ນຈະຖືກປະຕິເສດ ແລະ ຊອງເອກະສານດັ່ງກ່າວຈະສົ່ງຄືນໃຫ້ຜູ້ສະໜອງໂດຍປັດສະຈາກການເປີດຊອງດັ່ງກ່າວ. ການເປີດຊອງສົມທຽບລາຄາ ແມ່ນຈະຈັດຂຶ້ນໃນເວລາ 11:00 ໂມງເຊົ້າ ຂອງວັນທີ 31 ມີນາ 2023 ໂດຍຊ້ອງໜ້າຄະນະກຳມະການຈັດຊື້-ຈັດຈ້າງຂອງໂຄງການ ຊກຂ ແລະ ຜູ້ໃຫ້ບໍລິການສິ່ງພິມ ທີ່ສົນໃຈເຂົ້າຮ່ວມສົມທຽບລາຄາທັງໝົດ.
8. ທີ່ຢູ່ສຳລັບການຮັບເອກະສານສົມທຽບລາຄາ ແລະ ການເປີດຊອງປະມູນສົມທຽບລາຄາ ແມ່ນຈະຈັດຂຶ້ນໃນຫ້ອງປະຊຸມຊັ້ນ 4, ກົມຊົນລະປະທານ, ຖະໜົນເຈົ້າອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ສປປ ລາວ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ປ່າໄມ້ ກົມຊົນລະປະທານ

ບຸນຄຳ ສີດາວົງ